ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ 0483

ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເລກທີ: 0483 /ກຊສ

ນະຄອນຫຼວງວຽງຈັນ, ວັນທີ 6 ກຸມພາ 2017

# ຂໍ້ຕົກລົງ

# ວ່າດ້ວຍ ການປະເມີນສິ່ງແວດລ້ອມແບບຍຸດທະສາດ

- ອີງຕາມມາດຕາ 19 ຂອງກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ຂັ້ນຕອນ ການປະເມີນສິ່ງແວດລ້ອມ ແບບຍຸດທະສາດ ເພື່ອໃຫ້ຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ນຳເອົາວຽກງານສິ່ງແວດລ້ອມ ເຂົ້າໃນຂະບວນການສ້າງ ຫຼື ທົບທວນນະໂຍບາຍ, ຍຸດທະສາດ ແລະ ແຜນງານ ຂອງຂະແໜງການຕົນ ແນໃສ່ຫຼີກເວັ້ນ ຫຼື ຫຼຸດຜ່ອນ ຜົນກະທົບຕໍ່ສິ່ງແວດລ້ອມ ທັງເປັນການປະກອບສ່ວນໃຫ້ ການພັດທະນາເສດຖະກິດ-ສັງຄົມ ດຳເນີນຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ການປະເມີນສິ່ງແວດລ້ອມແບບຍຸດທະສາດ**

ການປະເມີນສິ່ງແວດລ້ອມແບບຍຸດທະສາດ ແມ່ນຂະບວນການ ຄາດຄະເນຜົນກະທົບ ທີ່ອາດຈະເກີດຂຶ້ນຕໍ່ສິ່ງແວດລ້ອມ ໃນເວລາວາງນະໂຍບາຍ, ຍຸດທະສາດ ແລະ ແຜນງານ ຊຶ່ງລວມເອົາການພິຈາລະນາບັນຫາ ທີ່ພົວພັນກັບຜົນກະທົບຂອງການປ່ຽນແປງດິນຟ້າອາກາດ. ການປະເມີນຜົນກະທົບດັ່ງກ່າວ ຕ້ອງຊີ້ໃຫ້ເຫັນວິທີການ, ມາດຕະການຫຼີກເວັ້ນ ຫຼື ຫຼຸດຜ່ອນຜົນກະທົບທີ່ຈະເກີດຂຶ້ນຕໍ່ສິ່ງແວດລ້ອມ ແນໃສ່ບັນລຸເປົ້າໝາຍການພັດທະນາແບບຍືນຍົງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ບັນຫາສິ່ງແວດລ້ອມ ໝາຍເຖິງ** ສິ່ງແວດລ້ອມທີ່ໄດ້ຮັບຜົນກະທົບ ຈາກຂະບວນການພັດທະນາເສດຖະກິດ-ສັງຄົມ. ບັນຫາດັ່ງກ່າວປະກອບມີ ການເພີ່ມຂຶ້ນຂອງສິ່ງເສດເຫຼືອ, ການຫຼຸດລົງຂອງຄຸນນະພາບນ້ຳ ແລະ ອາກາດ, ການປົນເປື້ອນຂອງສານເຄມີຢູ່ໃນດິນ, ການຫຼຸດໜ້ອຍຖອຍລົງ ຂອງເນື້ອທີ່ປົກຫຸ້ມປ່າໄມ້, ການສູນເສຍຊີວະນາໆພັນ ແລະ ການປ່ຽນແປງດິນຟ້າອາກາດ.
2. **ການພັດທະນາແບບຍືນຍົງ ໝາຍເຖິງ** ການພັດທະນາ ເສດຖະກິດ-ສັງຄົມ ໄປຄຽງຄູ່ກັບການປົກປັກຮັກສາ ສິ່ງແວດລ້ອມທີ່ບໍ່ມີຜົນກະທົບຕໍ່ຄົນຮຸ່ນຕໍ່ໆໄປໃນອະນາຄົດ;
3. **ຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ໝາຍເຖິງ** ບັນດາກະຊວງ, ອົງການປົກຄອງທ້ອງຖິ່ນທີ່ສ້າງ ຫຼື ທົບທວນ ນະໂຍບາຍ, ຍຸດທະສາດ ແລະ ແຜນງານຂອງຕົນ;

4. **ບັນຫາຕົ້ນຕໍດ້ານສິ່ງແວດລ້ອມ ໝາຍເຖິງ** ບັນຫາທີ່ມີຜົນກະທົບຕໍ່ຄວາມຍືນຍົງຂອງສັງຄົມ ແລະ ທໍາມະຊາດ ໃນລະດັບປະເທດ ແລະ ເຂດແຄວ້ນ;
5. **ການເຕີບໂຕສີຂຽວ ໝາຍເຖິງ** ການຂະຫຍາຍຕົວທາງດ້ານເສດຖະກິດ ທີ່ມີການນໍາໃຊ້ ຊັບພະຍາກອນທໍາມະຊາດ ໃຫ້ມີຄວາມຍືນຍົງ.
6. **ຜົນກະທົບ ໝາຍເຖິງ** ຜົນກະທົບທາງບວກ ແລະ ທາງລົບ ຫຼື ທາງກົງ ແລະ ທາງອ້ອມ ຕໍ່ສິ່ງ ແວດລ້ອມສັງຄົມ ແລະ ທໍາມະຊາດ;
7. **ຂໍ້ມູນດັ້ງເດີມ ໝາຍເຖິງ** ຂໍ້ມູນທີ່ມີກ່ອນ ການສ້າງ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ ແລະ ແຜນງານ;
8. **ອົງປະກອບສິ່ງແວດລ້ອມ ໝາຍເຖິງ** ສິ່ງແວດລ້ອມທໍາມະຊາດ ແລະ ມະນຸດສ້າງຂຶ້ນ.

**ມາດຕາ 4 ຫຼັກການພື້ນຖານ**

ການປະເມີນສິ່ງແວດລ້ອມແບບຍຸດທະສາດ ຕ້ອງດໍາເນີນຕາມຫຼັກການພື້ນຖານ ດັ່ງນີ້:

1. ນະໂຍບາຍ, ຍຸດທະສາດ ແລະ ແຜນງານ ຂອງຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຕ້ອງຕອບສະໜອງໃຫ້ແກ່ ຈຸດປະສົງ ແລະ ຄາດໝາຍຂອງວິໄສທັດ, ຍຸດທະສາດ ແລະ ແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ລວມທັງວິໄສທັດ, ຍຸດທະສາດ ແລະ ແຜນການປົກປັກຮັກສາສິ່ງແວດລ້ອມແຫ່ງຊາດ;
2. ລະບົບການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ ຕ້ອງສອດຄ່ອງກັນ ເພື່ອຫຼີກເວັ້ນຊ່ອງຫວ່າງ ທີ່ອາດຈະກໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມ;
3. ຮັບປະກັນການເຂົ້າຮ່ວມ ແລະ ມີສ່ວນຮ່ວມຢ່າງຕັ້ງໜ້າຂອງຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ລວມທັງປະຊາຊົນທີ່ອາດຈະໄດ້ຮັບຜົນກະທົບຈາກການສ້າງ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ ແລະ ແຜນງານດັ່ງກ່າວ;
4. ການສ້າງນະໂຍບາຍ, ຍຸດທະສາດ ແລະ ແຜນງານ ຂອງຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຕ້ອງດໍາເນີນໄປຄຽງຄູ່ກັບການປະເມີນສິ່ງແວດລ້ອມແບບຍຸດທະສາດ.

**ມາດຕາ 5 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ນໍາໃຊ້ສໍາລັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ທີ່ມີໜ້າທີ່ຮັບຜິດຊອບໃນການສ້າງ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ ແລະ ແຜນງານ.

## ໝວດທີ 2

## ການປະເມີນສິ່ງແວດລ້ອມແບບຍຸດທະສາດ

**ມາດຕາ 6 ຂັ້ນຕອນການປະເມີນສິ່ງແວດລ້ອມແບບຍຸດທະສາດ**

ການປະເມີນສິ່ງແວດລ້ອມແບບຍຸດທະສາດ ປະກອບດ້ວຍຂັ້ນຕອນ ດັ່ງນີ້:

1. **ການກັ່ນກອງ**

ການກັ່ນກອງ ແມ່ນເພື່ອເລືອກເຟັ້ນ ແລະ ກໍານົດ ບັນຫາສິ່ງແວດລ້ອມ ທີ່ອາດຈະສົ່ງຜົນກະທົບ ໃນເວລາສ້າງ ແລະ ປັບປຸງນະໂຍບາຍ, ຍຸດທະສາດ ແລະ ແຜນງານ. ເວັ້ນເສຍໃນກໍລະນີຄາດຄະເນເຫັນວ່າອາດບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມແມ່ນບໍ່ຈໍາເປັນດໍາເນີນ ການປະເມີນສິ່ງແວດລ້ອມແບບຍຸດທະສາດ.

ໃນການດໍາເນີນການກັ່ນກອງຕ້ອງອີງໃສ່ຈຸດປະສົງ, ເປົ້າໝາຍ ແລະ ລັກສະນະສະເພາະຂອງນະໂຍບາຍ,ຍຸດທະສາດ ແລະ ແຜນງານ ໂດຍຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ ຂອງແຕ່ລະຂົງເຂດ. ໃນນັ້ນ, ຕ້ອງກໍານົດໃຫ້ຊັດເຈນ ບັນຫາໃດທີ່ຈໍາເປັນຕ້ອງໄດ້ດໍາເນີນ ຫຼື ບໍ່ດໍາເນີນການປະເມີນສິ່ງແວດ ລ້ອມແບບຍຸດທະສາດ ແລ້ວສົ່ງໃຫ້ຂະແໜງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາ ມີຄໍາເຫັນທາງດ້ານວິຊາການ.

2. ການກຳນົດຂອບເຂດຂອງການປະເມີນ

ການກຳນົດຂອບເຂດຂອງການປະເມີນ ແມ່ນເພື່ອເລືອກເຟັ້ນ, ກຳນົດ ແລະ ຄາດຄະເນ ອົງປະກອບສິ່ງແວດລ້ອມ ແລະ ຊອກຫາທາງເລືອກທີ່ດີເລີດ ກ່ຽວກັບ ແຕ່ລະຫົວຂໍ້ເຊັ່ນ: ຊີວະນາໆພັນ, ສຸຂະພາບຂອງປະຊາຊົນ, ຄຸນນະພາບຂອງດິນ ແລະ ນ້ຳ ລວມທັງການປ່ຽນແປງດິນຟ້າອາກາດ ແລະ ອື່ນໆ.

ໃນການດຳເນີນ ການກຳນົດຂອບເຂດຂອງການປະເມີນ ຕ້ອງມີການຢັ້ງຢືນລະດັບຂອງຜົນກະທົບ ພ້ອມທັງສະເໜີທາງເລືອກທີ່ເໝາະສົມ ໂດຍປະສານສົມທົບກັບ ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

3. ການເກັບກຳຂໍ້ມູນ

ໃນການສ້າງ ນະໂຍບາຍ, ຍຸດທະສາດ ແລະ ແຜນງານ ຂອງຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຕ້ອງເກັບກຳຂໍ້ມູນດັ້ງເດີມ ກ່ຽວກັບ ສິ່ງແວດລ້ອມ, ເສດຖະກິດ-ສັງຄົມ ແລະ ເອກະສານທີ່ກ່ຽວຂ້ອງ ເພື່ອເປັນບ່ອນອີງໃນການຄາດຄະເນຜົນກະທົບ ທີ່ອາດຈະເກີດຂຶ້ນ ຈາກການຈັດຕັ້ງປະຕິບັດ.

4. ການຊອກຫາທາງເລືອກ

ການຊອກຫາທາງເລືອກ ແມ່ນເພື່ອເລືອກເຟັ້ນ ທາງເລືອກທີ່ດີທີ່ສຸດ ແລະ ກຳນົດມາດຕະການ ທີ່ເໝາະສົມ ໃຫ້ແກ່ການສ້າງ ແລະ ປັບປຸງ ນະໂຍບາຍ, ຍຸດທະສາດ ແລະ ແຜນງານ.

ການເລືອກເຟັ້ນດັ່ງກ່າວ ຕ້ອງແຍກໃຫ້ເຫັນຢ່າງຊັດເຈນ ກ່ຽວກັບ ຜົນກະທົບ ຊຶ່ງມີບັນຫາໃດ ທີ່ຕ້ອງຫຼີກເວັ້ນ ຫຼື ຫຼຸດຜ່ອນ ເປັນຕົ້ນຕໍ່ຊີວິດ, ສຸຂະພາບ, ການດຳລົງຊີວິດ, ທີ່ຢູ່ອາໄສ ແລະ ຊັບສິນຂອງປະຊາຊົນ, ມໍລະດົກທາງດ້ານວັດທະນະທຳ ແລະ ປະຫວັດສາດ, ຊັບພະຍາກອນທຳມະຊາດ, ລະບົບນິເວດ ແລະ ການປ່ຽນແປງດິນຟ້າອາກາດ.

5. ການສ້າງບົດປະເມີນສິ່ງແວດລ້ອມແບບຍຸດທະສາດ

ໃນການສ້າງນະໂຍບາຍ, ຍຸດທະສາດ ແລະ ແຜນງານ ຂອງຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຕ້ອງສ້າງບົດປະເມີນສິ່ງແວດລ້ອມແບບຍຸດທະສາດຂອງຕົນ ໂດຍໃຫ້ສອດຄ່ອງກັບຫຼັກການພື້ນຖານ ການປະເມີນສິ່ງແວດລ້ອມແບບຍຸດທະສາດ, ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ. ການປະເມີນສິ່ງແວດລ້ອມແບບຍຸດທະສາດ ຕ້ອງສະແດງໃຫ້ເຫັນຕົວຊີ້ວັດທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ.

6. ການປຶກສາຫາລື

ຂະແໜງການກ່ຽວຂ້ອງ ຕ້ອງມີການຈັດກອງປະຊຸມປຶກສາຫາລື ກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ລວມທັງປະຊາຊົນ ທີ່ອາດຈະໄດ້ຮັບຜົນກະທົບ ຈາກການສ້າງ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ ແລະ ແຜນງານ ພ້ອມທັງສັງລວມເອົາຄຳເຫັນ ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະ ປະເມີນຜົນໄດ້ຮັບຈາກການປຶກສາຫາລືດັ່ງກ່າວ ແລ້ວສົ່ງໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາ.

7. ການຢັ້ງຢືນເອົາບົດປະເມີນສິ່ງແວດລ້ອມແບບຍຸດທະສາດ

ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ຄົ້ນຄວ້າພິຈາລະນາ ແລະ ແນະນຳ ຕໍ່ບົດປະເມີນສິ່ງແວດລ້ອມແບບຍຸດທະສາດ ເປັນຕົ້ນ ວິທີການ, ມາດຕະການຫຼີກເວັ້ນ ຫຼື ຫຼຸດຜ່ອນ ຜົນກະທົບ ຕໍ່ສິ່ງແວດລ້ອມ ຕາມການສະເໜີຂອງຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ພາຍຫຼັງ ໄດ້ຮັບຟັງຄຳຄິດຄຳເຫັນຈາກພາກສ່ວນຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 6 ຂອງມາດຕານີ້ ເພື່ອເປັນບ່ອນອີງໃຫ້ແກ່ການປັບປຸງ ບົດປະເມີນສິ່ງແວດລ້ອມແບບຍຸດທະສາດດັ່ງກ່າວ.

ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສາມາດນຳໃຊ້ ສະພາຜູ້ຊ່ຽວຊານສະ ເພາະດ້ານ ໃນການພິຈາລະນາຢັ້ງຢືນດ້ານວິຊາການ ຕໍ່ບົດປະເມີນສິ່ງແວດລ້ອມແບບຍຸດທະສາດ ຂອງຂະ ແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຖ້າຫາກວ່າມີຄວາມຈຳເປັນ.

## ໝວດທີ 3
## ການແບ່ງຂັ້ນ, ການພິຈາລະນາ ແລະ ການສະເໜີ ບົດປະເມີນສິ່ງແວດລ້ອມແບບຍຸດທະສາດ

**ມາດຕາ 7 ການແບ່ງຂັ້ນໃນການທົບທວນ**

ຂະແໜງການທີ່ກ່ຽວຂ້ອງ ຕ້ອງສົ່ງບົດປະເມີນສິ່ງແວດລ້ອມແບບຍຸດທະສາດ ພ້ອມທັງນະໂຍບາຍ, ຍຸດທະສາດ ແລະ ແຜນງານ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາທົບທວນຄືນບັນຫາຕ່າງໆ ທີ່ອາດຈະເກີດມີຜົນກະທົບຕໍ່ສິ່ງແວດລ້ອມ ແລ້ວສົ່ງຄຳເຫັນເປັນລາຍລັກອັກສອນຄືນ ໃຫ້ຂະແໜງການທີ່ກ່ຽວຂ້ອງ.

ສຳລັບຢູ່ຂັ້ນແຂວງ, ນະຄອນຫຼວງ ພະແນກການທີ່ກ່ຽວຂ້ອງ ຕ້ອງສົ່ງບົດປະເມີນສິ່ງແວດລ້ອມແບບຍຸດທະສາດ ພ້ອມທັງ ຍຸດທະສາດ ແລະ ແຜນງານ ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາທົບທວນຄືນບັນຫາຕ່າງໆ ທີ່ອາດຈະເກີດມີຜົນກະທົບຕໍ່ສິ່ງແວດລ້ອມ ແລ້ວສົ່ງຄຳເຫັນເປັນລາຍລັກອັກສອນຄືນ ໃຫ້ພະແນກການທີ່ກ່ຽວຂ້ອງ.

**ມາດຕາ 8 ການພິຈາລະນາ**

ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ພິຈາລະນາມີຄຳເຫັນດ້ານວິຊາການ ຕໍ່ບົດປະເມີນສິ່ງແວດລ້ອມແບບຍຸດທະສາດ ໃນເວລາສ້າງນະໂຍບາຍ, ຍຸດທະສາດ ແລະ ແຜນງານ ຂອງຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຕາມເງື່ອນໄຂລຸ່ມນີ້:

1. ຊີ້ໃຫ້ເຫັນ ລະດັບ ແລະ ລັກສະນະຜົນກະທົບຕົ້ນຕໍ ຕໍ່ສິ່ງແວດລ້ອມ ທີ່ອາດຈະເກີດຂຶ້ນ ໃນໄລຍະສັ້ນ ແລະ ໄລຍະຍາວ ລວມທັງການວາງມາດຕະການຫຼີກເວັ້ນ ຫຼື ຫຼຸດຜ່ອນຜົນກະທົບ ຕໍ່ພື້ນທີ່ ທີ່ມີຄຸນຄ່າ ຫຼື ມີຄວາມສ່ຽງສູງ ເປັນຕົ້ນ ຕໍ່ຊີວິດ, ສຸຂະພາບ ຂອງຄົນ, ສັດ, ພືດ ແລະ ລະບົບນິເວດ ລວມທັງທັດສະນີຍະພາບ, ດິນບໍລິເວນນ້ຳ, ເຂດອະນຸລັກມໍລະດົກແຫ່ງຊາດທີ່ມີຄຸນຄ່າ ທາງດ້ານວັດທະນະທຳ, ປະຫວັດສາດ, ທຳມະຊາດທີ່ເປັນເຂດຫວງຫ້າມ ແລະ ອື່ນໆ;
2. ຄາດຄະເນຄວາມພ້ອມ ໃນການຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ ແລະ ແຜນງານ ທີ່ພົວພັນກັບການຄຸ້ມຄອງ ສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ;
3. ຕ້ອງມີການເຂົ້າຮ່ວມ ແລະ ມີສ່ວນຮ່ວມ ຂອງຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ລວມທັງ ປະຊາຊົນທີ່ອາດຈະໄດ້ຮັບຜົນກະທົບ ຈາກການສ້າງ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ ແລະ ແຜນງານ;
4. ນະໂຍບາຍ, ຍຸດທະສາດ ແລະ ແຜນງານ ຕ້ອງສອດຄ່ອງກັບຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຕາມທິດທີ່ມີຄຸນນະພາບ ສົມດູນຕໍ່ເນື່ອງ ຍືນຍົງ ແລະ ຫັນເປັນສີຂຽວ.

**ມາດຕາ 9 ການສະເໜີ**

ພາຍຫຼັງກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ຢັ້ງຢືນບົດປະເມີນສິ່ງແວດ ລ້ອມແບບຍຸດທະສາດ ຂອງຂະແໜງການທີ່ກ່ຽວຂ້ອງ ຈຶ່ງນຳສະເໜີນະໂຍບາຍ, ຍຸດທະສາດ ແລະ ແຜນ ງານຂອງຕົນ ຕໍ່ລັດຖະບານ ເພື່ອພິຈາລະນາຮັບຮອງ ຕາມລະບຽບການ.

ພາຍຫຼັງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ຢັ້ງຢືນບົດປະ ເມີນສິ່ງແວດລ້ອມແບບຍຸດທະສາດ ພະແນກກ່ຽວຂ້ອງ ຈຶ່ງນຳສະເໜີນະໂຍບາຍ, ຍຸດທະສາດ ແລະ ແຜນງານຂອງຕົນ ຕໍ່ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ ເພື່ອພິຈາລະນາຮັບຮອງຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4

## ການປະເມີນສິ່ງແວດລ້ອມແບບຍຸດທະສາດ ຕາມຂະແໜງການ

**ມາດຕາ 10 ບັນດາຂະແໜງການ**

ການປະເມີນສິ່ງແວດລ້ອມແບບຍຸດທະສາດ ໃນເວລາມີການສ້າງນະໂຍບາຍ, ຍຸດທະສາດ ແລະ ແຜນງານຂອງຂະແໜງການດັ່ງນີ້:

1. ພະລັງງານ ແລະ ບໍ່ແຮ່;
2. ກະສິກຳ ແລະ ປ່າໄມ້;
3. ອຸດສາຫະກຳ ແລະ ການຄ້າ;
4. ໂຍທາທິການ ແລະ ຂົນສົ່ງ;
5. ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
6. ວັດທະນະທຳ, ທ່ອງທ່ຽວ ແລະ ຂໍ້ມູນຂ່າວສານ;
7. ຂະແໜງການອື່ນທີ່ກ່ຽວຂ້ອງ ສ້າງນະໂຍບາຍ, ຍຸດທະສາດ ແລະ ແຜນງານ ທີ່ອາດຈະສົ່ງຜົນກະທົບຕໍ່ສິ່ງແວດລ້ອມ;

ຂະແໜງການທີ່ກ່ຽວຂ້ອງຕ້ອງດຳເນີນ ການປະເມີນສິ່ງແວດລ້ອມແບບຍຸດທະສາດ ໃນເວລາສ້າງ ຫຼື ປັບປຸງ ນະໂຍບາຍ, ຍຸດທະສາດ ແລະ ແຜນງານຂອງຕົນ ເພື່ອບັນລຸແຜນພັດທະນາເສດຖະກິດ-ສັງຄົມຕາມທິດທີ່ມີ ຄຸນນະພາບ ສົມດູນຕໍ່ເນື່ອງ ຍືນຍົງ ແລະ ທັນເປັນສີຂຽວ.

ສຳລັບ ຢູ່ຂັ້ນແຂວງ ແລະ ນະຄອນຫຼວງ ແມ່ນມອບໃຫ້ພະແນກການທີ່ຂຶ້ນກັບກະຊວງກ່ຽວຂ້ອງ ທີ່ໄດ້ລະບຸໄວ້ຂ້າງເທິງ ຂອງມາດຕານີ້. ພະແນກການຂັ້ນແຂວງ ແລະ ນະຄອນຫຼວງ ເປັນຜູ້ຮັບຜິດຊອບໃນການຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ ແລະ ແຜນງານ ຕາມຂະແໜງການຂອງຕົນຂັ້ນສູນກາງ ທີ່ລັດຖະບານໄດ້ຮັບຮອງ ໃຫ້ກາຍເປັນ ຍຸດທະສາດ ແລະ ແຜນງານສະເພາະ ໂດຍໃຫ້ສອດຄ່ອງກັບ ຂອງຂະແໜງການຕົນຂັ້ນສູນກາງ ແລ້ວນຳສະເໜີຜ່ານກອງປະຊຸມລະດັບແຂວງ, ນະຄອນຫຼວງ ຮັບຮອງເອົາຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 5

## ການມີສ່ວນຮ່ວມ ແລະ ການຕິດຕາມກວດກາ

**ມາດຕາ 11 ການມີສ່ວນຮ່ວມຂອງອົງການປົກຄອງທ້ອງຖິ່ນ**

ອົງການປົກຄອງທ້ອງຖິ່ນ ແລະ ພະແນກການທີ່ກ່ຽວຂ້ອງທຸກຂັ້ນ ຕ້ອງເປັນເຈົ້າການໃນການເຂົ້າຮ່ວມປຶກສາຫາລື ໃນຂະບວນການສ້າງ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດ ບົດປະເມີນສິ່ງແວດລ້ອມແບບຍຸດທະສາດ ຂອງທ້ອງຖິ່ນຕົນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ແລະ ຕາມຂໍ້ຕົກລົງສະບັບນີ້ ເພື່ອບັນລຸເປົ້າໝາຍຕາມທິດທີ່ມີ ຄຸນນະພາບ ສົມດູນຕໍ່ເນື່ອງ ຍືນຍົງ ແລະ ທັນເປັນສີຂຽວ.

**ມາດຕາ 12 ການມີສ່ວນຮ່ວມຂອງອົງການຈັດຕັ້ງ**

ອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນທຸກຂັ້ນ ລວມທັງ ອົງການຈັດຕັ້ງສັງຄົມ ມີສິດເຂົ້າຮ່ວມ ໃນຂະບວນການປະເມີນສິ່ງແວດລ້ອມແບບຍຸດທະສາດ ຕໍ່ນະໂຍບາຍ, ຍຸດທະສາດ ແລະ

ແຜນງານ ຂອງຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ພ້ອມທັງເຂົ້າຮ່ວມໃນການຕິດຕາມກວດກາ ປະເມີນຜົນການຈັດຕັ້ງປະຕິບັດ ໂຄງການ ພັດທະນາທີ່ໄດ້ກຳນົດໄວ້ໃນແຜນງານ.

**ມາດຕາ 13 ການມີສ່ວນຮ່ວມຂອງປະຊາຊົນ**

ປະຊາຊົນທີ່ອາດຈະໄດ້ຮັບຜົນກະທົບ ຈາກນະໂຍບາຍ, ຍຸດທະສາດ ແລະ ແຜນງານ ຂອງຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ມີສິດປະກອບຄຳເຫັນ, ສະເໜີຂໍ້ຂ້ອງໃຈ ແລະ ຂໍ້ສະເໜີຕ່າງໆ ໃນຂະບວນການປະເມີນສິ່ງແວດລ້ອມແບບຍຸດທະສາດ ພ້ອມທັງເຂົ້າຮ່ວມໃນການຕິດຕາມກວດກາ ປະເມີນຜົນການຈັດຕັ້ງປະຕິບັດ ໂຄງການ ພັດທະນາທີ່ໄດ້ກຳນົດໄວ້ໃນແຜນງານ.

**ມາດຕາ 14 ການຕິດຕາມກວດກາ**

ຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຕ້ອງດຳເນີນການຕິດຕາມກວດກາ ແລະ ປະເມີນ ການຈັດຕັ້ງປະຕິບັດ ບົດປະເມີນສິ່ງແວດລ້ອມແບບຍຸດທະສາດຂອງຕົນ ໃນແຕ່ລະໄລຍະ ໂດຍປະສານສົມທົບກັບຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຖ້າເຫັນວ່າມີຄວາມຈຳເປັນປັບປຸງ ຂະແໜງການກ່ຽວຂ້ອງຕ້ອງໄດ້ປັບປຸງຕາມລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 15 ງົບປະມານ**

ງົບປະມານຮັບໃຊ້ຂະບວນການສ້າງ, ປັບປຸງ ແລະ ຕິດຕາມກວດກາ ບົດປະເມີນ ສິ່ງແວດ ລ້ອມ ແບບຍຸດ ທະສາດ ແມ່ນໃຫ້ແຕ່ລະຂະແໜງການຂຶ້ນແຜນ ແລະ ນຳໃຊ້ງົບ ປະມານ ຮ່ວງດຽວ ກັນກັບ ຮ່ວງງົບປະມານການສ້າງ ຫຼື ປັບປຸງນະໂຍບາຍ, ຍຸດທະສາດ ແລະ ແຜນງານຂອງຕົນ ໂດຍໃຫ້ສອດຄ່ອງກັບ ກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ ທີ່ໄດ້ກຳນົດໄວ້.

**ມາດຕາ 16 ການຈັດຕັ້ງປະຕິບັດ**

ຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດ ຂະບວນການສ້າງ, ປັບປຸງ ແລະ ຕິດຕາມກວດກາ ບົດປະເມີນສິ່ງແວດລ້ອມແບບຍຸດທະສາດ ຕາມພາລະບົດບາດ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມອບໃຫ້ ກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ ອອກຄູ່ມືແນະນຳດ້ານວິຊາການ ແລະ ໂຄສະນາເຜີຍແຜ່ ໂດຍປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້.

**ມາດຕາ 17 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງໄດ້ລົງຈົດໝາຍ ເຫດທາງ ລັດຖະການ ສິບຫ້າ ວັນ.

ຂໍ້ຕົກລົງ ແລະ ລະບຽບການໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ອນແຕ່ຖືກຍົກເລີກ.

ລັດຖະມົນຕີ

**ສົມມາດ ພົລເສນາ**